# ເປີດກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2015
# ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ)

## Annual General Shareholders' Meeting for the year 2015
## Banque Pour Le Commerce Exterieur Lao Public (BCEL)

ໃນຕອນບ່າຍຂອງວັນທີ **28/04/2016** ໄດ້ມີການໄຂ ກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ທຄຕລ ປະຈຳປີ 2015 ຂຶ້ນທີ່ ສຳນັກງານຂອງຕະຫຼາດຫຼັກຊັບລາວ, ທີ່ຫ້ອງປະຊຸມໃຫ່ຍຊັ້ນ 8, ພາຍໃຕ້ການເປັນປະທານຂອງ **ທ່ານ ດຣ ບຸນເຫຼືອ ສິນໄຊວໍຣະວົງ ປະທານສະພາບໍລິຫານທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**, ພ້ອມນີ້ກໍ່ຍັງມີບັນດາທ່ານຄະນະສະພາບໍລິຫານ, ຜູ້ຖືຮຸ້ນ ທີ່ເປັນນັກລົງທຶນພາຍໃນ - ຕ່າງປະເທດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຫຼາຍສົມຄວນ.




ກອງປະຊຸມຄັ້ງນີ້ໄດ້ດຳເນີນເລີ່ມແຕ່ເວລາ 14:00ໂມງ – 15:30ໂມງ ຂອງວັນດຽວກັນ, ໂດຍມີຈຸດປະສົງ ຄົ້ນຄ້ວາພິຈາລະນາ ເພື່ອຮັບຮອງເອົາຫຼາຍບັນຫາສຳຄັນຕ່າງໆ ໂດຍສະເພາະແມ່ນຜົນການດຳເນີນທຸລະກິດປະຈຳປີ 2015 ແລະ ແຜນດຳເນີນທຸລະກິດສຳລັບປີ 2016, ໂຄງສ້າງການຈັດຕັ້ງຄະນະສະພາບໍລິຫານ ຄະນະກວດສອບຜູ້ຖືຮຸ້ນ ທຄຕລ, ການແບ່ງເງິນປັນຜົນແກ່ຂາຮຸ້ນ ທຄຕລ 2 ງວດປີ 2015, ການຮັບຮອງບໍລິສັດ ຜູ້ກວດສອບພາຍນອກ.

ທີ່ປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາຫຼາຍບັນຫາສຳຄັນເຊັ່ນ: ຮັບຮອງເອົາຜົນການດຳເນີນທຸລະກິດປະຈຳປີ 2015 ທີ່ໄດ້ຮັບການກວດສອບຈາກ ຜູ້ກວດສອບບັນຊີພາຍນອກ (ບໍລິສັດ E&Y) ເຊິ່ງມີກຳໄລກ່ອນອາກອນ ເທົ່າກັບ 128,8 ຕື້ກີບ, ກຳໄລຫຼັງຫັກອາກອນ ເທົ່າກັບ 105,2 ຕື້ກີບ. ກອງປະຊຸມເຫັນດີຈ່າຍເງິນປັນຜົນ ໃຫ້ຜູ້ຖືຮຸ້ນ ຈຳນວນ ທັງໝົດ 53,5 ຕື້ກີບ ຊຶ່ງຕົວເລກນີ້ແມ່ນ ໄດ້ຫັກອາກອນກຳໄລໃນທຸລະກິດ, ສ້າງຄັງຕ່າງໆຕາມລະບຽບການແລ້ວ ແລະ ເທົ່າກັບຮຸ້ນລະ 392 ກີບ. ໃນນີ້ ທຄຕລ ໄດ້ປັນຜົນງວດທີ 1 ໂດຍອີງຕາມຜົນການດຳເນີນງານ 6 ເດືອນຕົ້ນປີ 2015 (ຈ່າຍໃນເດືອນ 10/2015)ໄປແລ້ວຈຳນວນ 173 ກີບ, ການປັນຜົນງວດ 2 ນີ້ຈະແມ່ນ: 219 ກີບຕໍ່ຮຸ້ນ, ໃນຂະນະດຽວກັນກໍ່ໄດ້ຮັບຮອງເອົາແຜນດຳເນີນງານ ແລະ ແຜນທຸລະກິດ ສຳລັບ ປີ 2016 ທຽບໃສ່ປະຕິບັດປີ 2015 ຄື: ຍອດຊັບສິນ/ໜີ້ສິນ: ເພີ້ມຂຶ້ນ 6,6%, ຍອດເງິນຝາກເພີ່ມຂຶ້ນ 6,4%, ຍອດເງິນກູ້ຂະຫຍາຍຕົວເພີ້ມຂຶ້ນ 27,7% ກຳໄລກ່ອນອາກອນ 157 ຕື້ກີບ ທຽບໃສ່ຜົນກຳໄລ 2015 ເພີ້ມຂຶ້ນ 30.7%, ໃນນັ້ນມີແຜນຮັບພະນັກງານໃໝ່ເພື່ອປະກອບໃຫ້ ທຄຕລ ໃນທົ່ວລະບົບ ຈຳນວນ 90 ຄົນ ແລະ ແຜນການຂະຫຍາຍຕາໜ່າງບໍລິການເພີ້ມ 8 ຈຸດ. ທີ່ສຳຄັນ, ການແບ່ງປັນເງິນປັນຜົນປີ 2016 ແມ່ນຈະຈ່າຍພຽງຄັ້ງດຽວໂດຍອີງຕາມຜົນການດຳເນີນງານທ້າຍປີຂອງ ທຄຕລ. ນອກຈາກນັ້ນ, ກອງປະຊຸມຍັງໄດ້ຮັບຮອງເອົາ ບໍລິສັດ ເອີນແອນຢັງລາວ ຈຳກັດ ເປັນຜູ້ກວດສອບ ທຄຕລ ປະຈຳປີ 2016 ເພື່ອກວດສອບຕາມມາດຖານສາກົນ ແລະ ມາດຖານລາວ ເປັນພາສາລາວ ແລະ ພາສາອັງກິດ, ພ້ອມທັງກຳນົດອອກບົດລາຍງານ ປະຈຳ 6 ເດືອນຕົ້ນປີ ແລະ 6 ເດືອນ ທ້າຍປີ 2016.



ພາບບັນຍາກາດ ກອງປະຊຸມສາມັນຜູ້ຖືຮຸ້ນ ຂອງ ທຄຕລ ປະຈຳປີ 2015